ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 268 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 30.03.2021

# ດຳລັດ
## ວ່າດ້ວຍ ການສ້າງຕັ້ງ ອຸທິຍານແຫ່ງຊາດ ດົງຫົວສາວ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າສະຫງວນແຫ່ງຊາດ ສະບັບເລກທີ 134/ລບ, ລົງວັນທີ 13/5/2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0023/ກປ, ລົງວັນທີ 13 ມັງກອນ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ອຸທິຍານແຫ່ງຊາດ ດົງຫົວສາວ ໃນການປົກປັກຮັກສາ, ຄຸ້ມຄອງ ລັກສະນະສະເພາະທີ່ໂດດເດັ່ນ ພູມີທັດພູພຽງບໍລະເວນ, ພູມີອາກາດສະເພາະເຂດ, ຄວາມຫຼາກຫຼາຍຂອງສາຍນ້ຳ, ຫຼາກຫຼາຍທາງດ້ານຊີວະນາງພັນ, ຖິ່ນທີ່ຢູ່ອາໄສຂອງພັນສັດ, ພັນພືດ (ກຸຫຼາບພັນປີ) ແລະ ເຄື່ອງປ່າຂອງດົງ, ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມຂອງທິວທັດທຳມະຊາດ, ວັດທະນະທຳ, ທ່ອງທ່ຽວ ແລະ ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ແນໃສ່ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ອຸທິຍານແຫ່ງຊາດດົງຫົວສາວ**

ອຸທິຍານແຫ່ງຊາດ ດົງຫົວສາວ ຕັ້ງຢູ່ແຂວງຈຳປາສັກ ກວມເອົາ ສາມ ເມືອງ ຄື: ເມືອງປະທຸມພອນ, ເມືອງປາກຊ່ອງ ແລະ ເມືອງບາຈຽງຈະເລີນສຸກ ຊຶ່ງຢູ່ໃນລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ | 106°07’35” |
| | ເສັ້ນຂະໜານ | 15°11’13” |
| ທິດຕາເວັນອອກ | ເສັ້ນແວງ | 106°17’50” |
| | ເສັ້ນຂະໜານ | 14°58’46” |
| ທິດໃຕ້ | ເສັ້ນແວງ | 106°10’32” |
| | ເສັ້ນຂະໜານ | 14°47’26” |
| ທິດຕາເວັນຕົກ | ເສັ້ນແວງ | 105°55’03” |
| | ເສັ້ນຂະໜານ | 15°00’26” |

ຂອບເຂດອຸທິຍານແຫ່ງຊາດດົງຫົວສາວ ໃຫ້ອີງໃສ່ແຜນທີ່ພູມມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາ ເສັ້ນແວງ ແລະ ເສັ້ນຂະໜານ ເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ ສັນພູ (ສັນປັນນ້ຳ), ຕີນພູ, ສາຍຫ້ວຍ, ແມ່ນ້ຳ, ເສັ້ນທາງ ເປັນຂີດໝາຍ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນ ບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເປັນຢ່າງດີ.

ອຸທິຍານແຫ່ງຊາດດົງຫົວສາວ ມີເນື້ອທີ່ທັງໝົດ ເກົ້າສິບເກົ້າພັນເຈັດຮ້ອຍເກົ້າສິບຫ້າ (99.795) ເຮັກຕາ.

ທີ່ຕັ້ງ ແລະ ເນື້ອທີ່ ຂອງອຸທິຍານແຫ່ງຊາດ ດົງຫົວສາວ ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ ມາດຕາສ່ວນ 1:250.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ອຸທິຍານແຫ່ງຊາດດົງຫົວສາວ ມີ ກອງຄຸ້ມຄອງອຸທິຍານແຫ່ງຊາດ ດົງຫົວສາວ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງຄຸ້ມຄອງດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ອຸທິຍານແຫ່ງຊາດດົງຫົວສາວ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດອຸທິຍານ ແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງ ທີ່ສົ່ງຜົນກະທົບຕໍ່ ອຸທິຍານແຫ່ງຊາດດົງຫົວສາວ;
5. ກອງທຶນການທ່ອງທ່ຽວ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ພັນຄຳ ວິພາວັນ**